ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 0063 /ກປຝ

ນະຄອນຫຼວງວຽງຈັນ, ວັນທີ 13 JAN 2020

# ແຈ້ງການ

**ເຖິງ: ຂະແໜງປູກຝັງ, ຜູ້ປະກອບການ ແລະ ພາກສ່ວນກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ອັດຕາຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນ ມາດຕະຖານກະສິກຳສະອາດ.**

- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 003/ປປທ, ລົງວັນທີ 26.12.2012;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ, ສະບັບເລກທີ 3825/ກປ, ລົງວັນທີ 18 ສິງຫາ 2017;
- ອີງຕາມ ການສະເໜີຂອງພະແນກມາດຕະຖານ, ສະບັບເລກທີ........./ພມຖ, ລົງວັນທີ...............

ເພື່ອເຮັດໃຫ້ ການເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນກະສິກຳສະອາດ ສອດຄ່ອງຕາມລະບຽບຫຼັກການ ທີ່ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26.12.2012 ແລະ ເປັນເອກະພາບ ໃນການຂຶ້ນແຜນງົບປະມານໃນການລົງກວດກາ ແລະ ການຢັ້ງຢືນ, ກົມປູກຝັງ ຈຶ່ງອອກແຈ້ງການ ກ່ຽວກັບ ກຳນົດຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນ ມາດຕະຖານກະສິກຳສະອາດດັ່ງນີ້:

1. ຄ່າທຳນຽມການອອກໃບຢັ້ງຢືນກະສິກຳອິນຊີ, ກະສິກຳສະອາດ ໃຫ້ເກັບດັ່ງນີ້:

| ລ/ດ | ລາຍການ | ອັດຕາ ກີບ/ຄັ້ງ |
|---|---|---|
| 1 | ການຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ມາດຕະຖານກະສິກຳທີ່ດີ: ການຢັ້ງຢືນຟາມ, ກຸ່ມ | 50,000 |
| 1.1 | ການອອກໃບຢັ້ງຢືນຄັ້ງທຳອິດ | 50,000 |
| 1.2 | ການຕໍ່ໃບຢັ້ງຢືນ (ປະຈຳປີ) | 20,000 |
| 1.3 | ການຢັ້ງຢືນການປູກຝັງ (ອິນຊີ, ເຄມີ) | 50,000 |
| 1.4 | ການຢັ້ງຢືນປັດໃຈການຜະລິດຄັ້ງທຳອິດ | 100,000 |
| 1.5 | ການຕໍ່ໃບຢັ້ງຢືນປັດໃຈການຜະລິດປະຈຳປີ | 50,000 |

2. ຄ່າບໍລິການກວດກາກິດຈະການກະສິກຳອິນຊີ ແລະ ກະສິກຳທີ່ດີ ພ້ອມໃບຢັ້ງຢືນ ໃຫ້ເກັບດັ່ງນີ້.

| ລ/ດ | ລາຍການ | ອັດຕາ ກີບ/ຄັ້ງ |
|---|---|---|
| 1 | ການວິໄຈ ແລະ ລວບລວມຂໍ້ມູນ ເພື່ອອອກໃບຢັ້ງຢືນ ຜະລິດຕະພັນກະສິກຳອິນຊີ ແລະ ຜະລິດຕະພັນພືດ ທີ່ບໍ່ແມ່ນພືດຜະລິດຈາກການດັດແປງພັນທຸກຳ | 50,000 |
| 2 | ການກວດກາພື້ນທີ່ການຜະລິດກະສິກຳອິນຊີ, ກະສິກຳທີ່ດີ | 25,000 |
| 3 | ການກວດກາຜະລິດຕະພັນກະສິກຳອິນຊີ, ກະສິກຳທີ່ດີ | 100,000/ຜະລິດຕະພັນ |
| 4 | ການກວດກາສະຖານທີ່ປະກອບການ: | |
| 4.1 | ຂະໜາດນ້ອຍ (ຜະລິດແບບອິນຊີທັງໝົດ) | 250,000 |
| 4.2 | ຊຸດທົດສອບຂະໜາດນ້ອຍ (ຜະລິດແບບອິນຊີ ແລະ ເຄມີ) | 500,000 |
| 4.3 | ຂະໜາດໃຫຍ່ (ຜະລິດແບບອິນຊີທັງໝົດ) ເນື້ອທີ່ ຕັ້ງແຕ່ 0-5 ເຮັກຕາ | 750,000 |
| 4.4 | ຂະໜາດໃຫຍ່ (ຜະລິດແບບອິນຊີ ແລະ ເຄມີ) ເນື້ອທີ່ ຕັ້ງແຕ່ 5 ເຮັກຕາ ຂຶ້ນໄປ | 1,500,000 |
| 5 | ການກວດກາຈຳນວນສະມາຊິກໃນໂຄງການ ຫຼື ກຸ່ມ | 50,000 ກີບ/ຄອບຄົວ |
| 6 | ການກວດກາຜະລິດຕະພັນຈາກທຳມະຊາດ | 100,000 ກີບ/ຊະນິດ |
| 7 | ການບໍລິການເພື່ອການສົ່ງອອກປະຈຳປີ | 800,000 ກີບ/ປີ |
| 8 | ການຈັດກຽມເອກະສານເພີ່ມເຕີມເພື່ອການສົ່ງອອກ | 100,000 ກີບ/ຊະນິດ |
| 9 | ການກວດກາປັດໃຈການຜະລິດ | 500,000 ກີບ/ຊະນິດ |

3. ສຳລັບວິທີການຄິດໄລ່ແຜນການລົງກວດກາ, ວິທີການກຳນົດຈຳນວນສະມາຊິກໂຄງການ ຫຼື ກຸ່ມ, ແມ່ນ ໃຫ້ເຮັດເປັນປຶ້ມຄູ່ມື ພັນຂະຫຍາຍລະອຽດ ເພື່ອເປັນມາດຖານໃນການສຸ່ມຈຳນວນຕົວຢ່າງ ໃນການລົງກວດກາຕົວຈິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມປູກຝັງ

ບ່ອນສົ່ງ
- ພະແນກມາດຕະຖານ 1 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ)
- ພະແນກ ແຜນການ ແລະ ຮ່ວມມື 1 ສະບັບ (ເພື່ອຊາບ)
- ພະແນກບໍລິຫານ ແລະ ຈັດຕັ້ງ 1 ສະບັບ (ເພື່ອຊາບ)
- ຂະແໜງປູກຝັງທົ່ວປະເທດ 1 ສະບັບ (ເພື່ອຊາບ)